# ການເກັບອາກອນ

## ເປັນໂຄງການທີ່ຮັບປະກັນວ່າ ບຸກຄົນ, ນາຍຈ້າງ ແລະ ຄອບຄົວທຸກປະເພດໄດ້ຮັບເວລາ ແລະ ການສະໜັບສະໜູນທີ່ພວກເຂົາຕ້ອງການເພື່ອດູແລທີ່ຕົນເອງ ແລະ ຄົນທີ່ເຂົາເຈົ້າຮັກ ເມື່ອເຂົາເຈົ້າຕ້ອງການມັນຫຼາຍທີ່ສຸດ.

ພະນັກງານ ແລະນາຍຈ້າງຂອງ ລັດ Oregon ຈ່າຍເງິນສົມທົບໃຫ້ກັບ Paid Leave Oregon. ເງິນຊ່ວຍເຫຼືອ Paid Leave ຕ້ອງໄດ້ເສຍອາກອນ. ພະແນກແຮງງານ Oregon ບໍ່ໄດ້ຫັກອາກອນຢູ່ບ່ອນຈ່າຍອັດຕະໂນມັດຈາກຜົນປະ ໂຫຍດ. ພະນັກງານສາມາດຮ້ອງຂໍ Paid Leave ເພື່ອຫັກອາກອນຢູ່ບ່ອນຈ່າຍເພື່ອໃຫ້ຄຸ້ມຄອງຜົນປະໂຫຍດທາງ ອາກອນ. Paid Leave Oregon ໃຫ້ຂໍ້ມູນທົ່ວໄປເພື່ອຊ່ວຍອະທິບາຍວິທີການເກັບພາສີເງິນສົມທົບ ແລະ ຜົນປະໂຫຍດຕ່າງໆ. ເຖິງຢ່າງໃດກໍ່ຕາມ, ນາຍຈ້າງ ແລະ ພະນັກງານທຸກຄົນຄວນປຶກສາກັບທີ່ປຶກສາດ້ານພາສີຂອງຕົນເອງກ່ຽວກັບວິທີການເກັບພາສີເງິນສົມທົບ ແລະ ຜົນປະໂຫຍດຕ່າງໆ ຈາກ Paid Leave Oregon ຂອງເຂົາເຈົ້າ.

**ໝາຍເຫດ:** ກົມສ່ວຍສາອາກອນ (IRS) ໄດ້ໃຫ້ຄໍາແນະນໍາລະອຽດກ່ຽວກັບການເສຍພາສີທາງດ້ານຜົນປະໂຫຍດປະກັນໄພຄອບຄົວ ແລະ ການລາພັກທາງການແພດທີ່ໄດ້ຮັບຄ່າຈ້າງ ຕາມກົດລະບຽບວ່າດ້ວຍລາຍຮັບ ສະບັບ 2025-4.

## ເງິນສົມທົບຂອງຂ້າພະເຈົ້າແມ່ນຕັດອອກກ່ອນ ຫຼື ຫຼັງຫັກອາກອນແລ້ວ?

ເງິນສົມທົບທີ່ຈ່າຍແມ່ນຈະຕັດຫຼັງເສຍອາກອນແລ້ວ. ການສົມທົບຂອງ Paid Leave ຈະບໍ່ເຮັດໃຫ້ອາກອນລາຍໄດ້ ຂອງທ່ານຫຼຸດລົງ.

## ນາຍຈ້າງຂອງຂ້າພະເຈົ້າໄດ້ເລືອກຈ່າຍບາງສ່ວນ (ຫຼື ທັງຫມົດ) ຂອງເງິນສົມທົບຂອງພະນັກງານ. ສ່ວນທີ່ນາຍຈ້າງຈ່າຍໃຫ້ຂ້າພະເຂົ້ານັບເປັນລາຍໄດ້ບໍ?

ແມ່ນ, ຈໍານວນເງິນທີ່ນາຍຈ້າງຂອງທ່ານຈ່າຍໃຫ້ເພື່ອຄຸ້ມຄອງເງິນສົມທົບ Paid Leave ຂອງທ່ານແມ່ນຖືວ່າເປັນລາຍ ໄດ້ ແລະ ຖືກເພີ່ມໃສ່ຄ່າແຮງງານຂອງທ່ານທີ່ຕ້ອງເສຍອາກອນ. ເຖິງຢ່າງໃດກໍ່ຕາມ, ພວກມັນບໍ່ໄດ້ຖືກພິຈາລະນາເປັນຄ່າຈ້າງສໍາລັບຈຸດປະສົງຂອງ Paid Leave Oregon. ຈໍານວນເງິນດັ່ງກ່າວຈະບໍ່ເພີ່ມຄ່າແຮງງານ ຂອງທ່ານສໍາລັບ Paid Leave.

## ຂ້ອຍຈະຊອກຫາຈຳນວນເງິນທີ່ Paid Leave ຂອງຂ້າພະເຈົ້າສົມທົບໃນປີ?

ນາຍຈ້າງຂອງທ່ານສາມາດເລືອກທີ່ຈະລາຍງານຈຳນວນເງິນສົມທົບຂອງ Paid Leave ທີ່ທ່ານໄດ້ຈ່າຍຢູ່ໃນຕົ້ນຂໍ້ວຂອງ ທ່ານ. ຖ້ານາຍຈ້າງລາຍງານການສົມທົບ Paid Leave ທັງໝົດທີ່ທ່ານໄດ້ຈ່າຍໃນລະຫວ່າງປີຢູ່ໃນແບບຟອມ W-2 ຂອງທ່ານ, ມັນຈະຢູ່ໃນກ່ອງ 14.

## ຜົນປະໂຫຍດ ທາງ Paid Leave ທັງໝົດຈະຕ້ອງເສຍພາສີບໍ?

ແມ່ນແລ້ວ, ຜົນປະໂຫຍດທີ່ໄດ້ຮັບຈາກໂຄງການ Paid Leave Oregon ໂດຍທົ່ວໄປແລ້ວແມ່ນຕ້ອງເສຍພາສີ.

ຜົນປະໂຫຍດການລາພັກເພື່ອຄອບຄົວ ແລະ ຄວາມປອດໄພ ແມ່ນຕ້ອງເສຍພາສີຢ່າງຄົບຖ້ວນ. ສຳລັບຜົນປະໂຫຍດການລາພັກທາງການແພດ, ມີພຽງແຕ່ສ່ວນໜຶ່ງຂອງຜົນປະໂຫຍດທີ່ຈ່າຍໂດຍເງິນສົມທົບຂອງນາຍຈ້າງເທົ່ານັ້ນທີ່ຕ້ອງເສຍພາສີ. ຜົນປະໂຫຍດການລາພັກທາງການແພດລວມມີການລາພັກຍ້ອນສະພາບສຸຂະພາບທີ່ຮ້າຍແຮງຂອງຜູ້ຮຽກຮ້ອງເອງ ແລະ ການລາພັກເພີ່ມເຕີມສຳລັບການຖືພາ.

## Paid Leave ຈະສົ່ງແບບຟອມ Form 1099 ສະແດງໃຫ້ວ່າຂ້າພະເຈົ້າໄດ້ຮັບເງິນຊ່ວຍເຫຼືອຫຼາຍປານໃດໃນລະຫວ່າງປີບໍ?

ແມ່ນ, ທ່ານຂະໄດ້ຮັບແບບຟອມ 1099 ໃນທ້າຍເດືອນມັງກອນຂອງທຸກໆປີ. ແບບຟອມ 1099 ຈະລວມເອົາເງິນຊ່ວຍ ເຫຼືອທີ່ທ່ານໄດ້ຮັບ ແລະ ອາກອນຂອງລັດຖະບານກາງ ຫຼື ລັດທີ່ຫັກຢູ່ບ່ອນຈ່າຍຈາກປີກ່ອນວ່າມີຈຳນວນເທົ່າໃດ. ໜ່ວຍ ງານບໍລິການລາຍຮັບພາຍໃນ ແລະ ພະແນກລາຍຮັບຂອງ ລັດ Oregon ຍັງໄດ້ຮັບສຳເນົາແບບຟອມ 1099.

## ເນື່ອງຈາກ Paid Leave ບໍ່ໄດ້ຫັກອາກອນລາຍໄດ້ຂອງລັດຖະບານກາງ ແລະ ລັດ Oregon ໂດຍອັດ ຕະໂນມັດ, ຂ້າພະເຂົ້າສາມາດຮ້ອງຂໍໃຫ້ເຂົາກັກໄວ້ໄດ້ແນວໃດ?

ທ່ານອາດຈະຮ້ອງຂໍໃຫ້ຫັກອາກອນຢູ່ບ່ອນຈ່າຍຂອງລັດຖະບານກາງ ແລະ ລັດຜ່ານໃບຄຳຮ້ອງຂອງທ່ານສຳລັບເງິນຊ່ວຍ ເຫຼືອ Paid Leave ຫຼື ອັບເດດການເລືອກຫັກຢູ່ບ່ອນຈ່າຍຂອງເຈົ້າຜ່ານບັນຊີ Frances Online ຂອງທ່ານ. ມີ ແບບຟອມອະນຸຍາດຫັກອາກອນ ມີຢູ່ທີ່ເວັບໄຊທ໌ ຂອງ Paid Leave.

## ຖ້າຂ້າພະເຈົ້າໄດ້ຮັບເງິນຊ່ວຍເຫຼືອຜ່ານແຜນທຶນເທົ່າຂອງນາຍຈ້າງຂອງຂ້າພະເຈົ້າ, ຂ້າພະເຈົ້າຈະໄດ້ຮັບ ແບບຟອມ 1099 ບໍ?

ບໍ່. ນາຍຈ້າງຂອງທ່ານ ຫຼື ຜູ້ໃຫ້ບໍລິການແຜນທຶນເທົ່າຂອງເຂົາເຈົ້າຄວນລວມເອົາຜົນປະໂຫຍດສິ່ງເຫຼົ່ານີ້ຢູ່ໃນແບບຟອມ W-2 ຂອງທ່ານ.

## ຖ້ານາຍຈ້າງຂອງຂ້າພະເຈົ້າໄດ້ຮັບການຊ່ວຍເຫຼືອລ້າເພື່ອຊ່ວຍເຫຼືອຄ່າໃຊ້ຈ່າຍໃນການຈ້າງລູກຈ້າງຊົ່ວຄາວ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບຄ່າຈ້າງໃນຂະນະທີ່ລູກຈ້າງຢູ່ຊ່ວງພັກ, ການຊ່ວຍເຫຼືອແມ່ນຕ້ອງເສຍ ອາກອນບໍ?

ການຊ່ວຍເຫຼືອລ້າໂດຍທົ່ວໄປແມ່ນເສຍອາກອນ ແລະ ພວກເຂົາຈະຕ້ອງລາຍງານໃຫ້ເປັນລາຍໄດ້ສຳລັບທຸລະກິດຂອງ ພວກເຂົາ. ເຂົາເຈົ້າຈະໄດ້ຮັບແບບຟອມ 1099 ໃນທ້າຍເດືອນມັງກອນຂອງແຕ່ລະປີ, ເຊິ່ງຈະບອກຈຳນວນເງິນທັງໝົດ ທີ່ເຂົາເຈົ້າໄດ້ຮັບໃນການຊ່ວຍເຫຼືອລ້າຈາກປີກ່ອນ. ໜ່ວຍງານບໍລິການລາຍຮັບພາຍໃນ ແລະ ພະແນກລາຍຮັບຂອງ ລັດ Oregon ຍັງໄດ້ຮັບສຳເນົາແບບຟອມ 1099 ນີ້ອີກດ້ວຍ.